ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ **1066** /ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 15 ສິງຫາ 2014

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ
ທ່ານ ປະທານຄະນະ/ຫົວໜ້າໃຫຍ່ຜູ້ບໍລິຫານ ບໍລິສັດຕະຫຼາດຫຼັກຊັບລາວຈຳກັດ
ທີ່ນັບຖື,

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາຜູ້ອຳນວຍການສະໄໝສາມັນ ຄັ້ງທີ 3/2014

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 03 ເມສາ 2014;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 22/LSX, ລົງວັນທີ 07 ມັງກອນ 2011.
- ອີງຕາມມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2012, ວັນທີ 22/04/2013.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາຜູ້ອຳນວຍການສະໄໝສາມັນ ຄັ້ງທີ 3/2014 ວັນທີ 14 ສິງຫາ 2014, ດັ່ງມີລາຍລະອຽດລຸ່ມນີ້:

1. ອະນຸມັດບົດລາຍງານການເງິນ 6 ເດືອນຕົ້ນປີ 2014 (01/01/2014-30/06/2014) ເຊິ່ງຜູ້ກວດສອບບັນຊີພາຍນອກໄດ້ມີການທົບທວນແລ້ວ ແລະໃຫ້ນຳເລື່ອງນີ້ ລາຍງານຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2014 ເພື່ອຊາບ.
2. ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ຂອງບໍລິສັດ 6 ເດືອນຕົ້ນປີ 2014 (01/01/2014-30/06/2014) ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ, ຄັງສຳຮອງເພື່ອການສ້ອມແປງເຂື່ອນ ແລະຂະຫຍາຍທຸລະກິດ ແລະຄັງສຳຮອງເພື່ອໃຫ້ບຳເນັດພະນັກງານ; ໃຫ້ແກ່ຜູ້ຖືຮຸ້ນ ທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **29 ກັນຍາ 2014** ໃນອັດຕາ **182 ກີບຕໍ່ຮຸ້ນ**, ລວມເປັນເງິນປັນຜົນທີ່ຈະຈ່າຍທັງໝົດປະມານ **223,17 ຕື້ກີບ**, ກຳນົດຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ໃນວັນທີ **10 ຕຸລາ 2014** ແລະໃຫ້ນຳເລື່ອງນີ້ລາຍງານຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2014 ເພື່ອຮັບຮອງ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,
ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ้າລາວ ມະຫາຊົນ EDL-Generation Public Company

ບຸນອຸ້ມ ສີວັນເພັງ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la,ເວັບໄຊທ์:www.edlgen.com.la